care
ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ. ຕູ້ ປ.ນ 4328, ຖະໜົນໜອງສ້າງທໍ່, ບ້ານ ໜອງສ້າງທໍ່,
ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂທ: (+856-21) 217 727.
ອີເມລ: Lao.info@careint.org

ວັນທີ. 29 ເມສາ 2026

# ປະກາດເຊີນປະມູນ

ອົງການແຄຣ໌ນານາຊາດ ປະຈໍາ ສປປ ລາວ ໂດຍຮ່ວມກັບພະແນກສາທາລະນະສຸກແຂວງຜົ້ງສາລີ ໄດ້ຮັບທຶນຊ່ວຍເຫລືອຈາກມູນລະນິທິບອດສຕີເບີອາເມລິກາ ເພື່ອຈັດຕັ້ງປະຕິບັດໂຄງການ"ສ້າງຄວາມເຂັ້ມແຂງໃນການເຂົ້າເຖິງນໍ້າສະອາດເພື່ອຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດຢູ່ແຂວງຜົ້ງສາລີ", ຈຸດປະສົງຫລັກຂອງໂຄງການນີ້ ແມ່ນເພື່ອສະໜອງການເຂົ້າເຖິງນໍ້າສະອາດ ໃຫ້ແກ່ 3 ບ້ານ ໃນເມືອງໃໝ່ ແລະ 3 ບ້ານໃນເມືອງສຳພັນ ຂອງແຂວງຜົ້ງສາລີ. ສະນັ້ນ ພວກຂ້າພະເຈົ້າຈຶ່ງຂໍເຊີນຜູ້ທີ່ສົນໃຈ, ພາກສ່ວນທຸລະກິດ ຫລື ບໍລິສັດ ຍື່ນປະມູນລາຄາ ສໍາລັບການສະໜອງອຸປະກອນກໍ່ສ້າງສໍາລັບການກໍ່ສ້າງລະບົບນໍ້າລິນ ໃນຮູບແບບການຍື່ນຊອງປະມູນປິດ ໂດຍອີງໃສ່ເງື່ອນໄຂລຸ່ມນີ້:

- ລາຍລະອຽດຂອງຜູ້ສະໜອງ: ລະບຸຊື່, ທີ່ຢູ່ ແລະ ເບີຕິດຕໍ່ໃນໃບສະເໜີລາຄາຢ່າງຊັດເຈນ.
- ສໍາເນົາທະບຽນວິສະຫະກິດ ແລະ ທະບຽນອາກອນ.
- ຂຽນແບບສອບຖາມສຳລັບຜູ້ສະໜອງ (ອົງການແຄຣ໌ຈະສະໜອງໃຫ້)
- ເຄື່ອງແຕ່ລະລາຍການຕ້ອງມີຮູບປະກອບ ຫລື ປື້ມຮູບພາບຂອງເຄື່ອງ ແລະ ແຫລ່ງທີ່ມາຂອງເຄື່ອງ.
- ລະບຸເງື່ອນໄຂການນໍາສົ່ງ ແລະ ການຈ່າຍເງິນໃຫ້ຊັດເຈນ (ກໍານົດເວລາການນໍາສົ່ງ ແລະ ສະຖານທີ່ນໍາສົ່ງ).
- ໃບສະເໜີລາຄາຕ້ອງລະບຸຄ່າຂົນສົ່ງ ເຖິງບ້ານເປົ້າໝາຍ ຢູ່ທັງສອງເມືອງ (ເມືອງສຳພັນ ແລະ ເມືອງໃໝ່, ແຂວງຜົ້ງສາລີ).
- ໃບສະເໜີລາຄາ ຕ້ອງລະບຸເປັນເງິນກີບເທົ່ານັ້ນ.
- ກໍານົດເວລາຂອງໃບສະເໜີລາຄາ.
- ລະບຸເງື່ອນໄຂຮັບປະກັນຢ່າງຊັດເຈນ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບອຸປະກອນກໍ່ສ້າງ ແລະ ສະຖານທີ່ນຳສົ່ງ, ກະລຸນາຕິດຕໍ່

phetsamai.phimphisan@care.org WhatsApp: 020 54707666

ສໍາລັບຊອງປະມູນ ແລະ ເອກະສານປະກອບຕ່າງໆ ຕ້ອງຍື່ນຫາ ອົງການແຄຣ໌ ຕາມທີ່ຢູ່ຂ້າງລຸ່ມນີ້ ໂດຍບໍ່ໃຫ້ກາຍວັນທີ 08 ພຶດສະພາ 2026 ກ່ອນໂມງລັດຖະການ:

**ຫ້ອງການແຄຣ໌ ທີ່ນະຄອນຫລວງວຽງຈັນ:**

ເຮືອນເລກທີ 021/01 ບ້ານໜອງສ້າງທໍ່, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ ຫລື ສົ່ງຜ່ານທາງອີເມວຫາ:

Lina.vongnasack@care.org

**ກະລຸນາລະບຸໜ້າຊອງປະມູນຫາ:** ຄະນະກໍາມະການຄັດເລືອກການປະມູນຂອງອົງການແຄຣ໌

**ເລື່ອງ:** ປະມູນອຸປະກອນກໍ່ສ້າງນໍ້າລິນ ສຳລັບໂຄງການ SWARC

**ໝາຍເຫດ:** ເອກະສານທີ່ຍື່ນສໍາລັບການປະມູນ ຈະບໍ່ຖືກສົ່ງຄືນ, ອົງການແຄຣ໌ຂໍສະຫງວນສິດ ໃນການຄັດເລືອກຜູ້ສະໜອງ ແລະ ຜູ້ສະໜອງທີ່ຖືກຄັດເລືອກເທົ່ານັ້ນ ຈະໄດ້ຮັບການຕິດຕໍ່ກັບຈາກອົງການແຄຣ໌